CONSUMER DIRECT CARE NETWORK WASHINGTON

# ຂີດຈຳກັດອາທິດການເຮັດວຽກ (WWL) ແລະ ວິທີການຮ້ອງຂໍ ການເພີ່ມຊົ່ວຄາວ



## ຂີດຈຳກັດການເຮັດວຽກຕໍ່ອາທິດ (WWL)

- WWL ແມ່ນຈຳນວນຊົ່ວໂມງບໍລິການລວມທັງໝົດ ທີ່ຜູ້ໃຫ້ບໍລິການສ່ວນບຸກຄົນ (IP) ສາມາດໃຫ້ບໍລິການໄດ້ໃນການເຮັດວຽກອາທິດໜຶ່ງ (ວັນອາທິດ ຫາ ວັນເສົາ).
- ຈຳນວນ WWL ມາດຕະຖານແມ່ນສີ່ສິບ (40) ຊົ່ວໂມງຕໍ່ອາທິດ.
- ຖ້າທ່ານບໍ່ມີຈຳນວນ WWL ຖາວອນທີ່ສູງກວ່າ, ທ່ານອາດຈະບໍ່ສາມາດເຮັດວຽກໄດ້ຫຼາຍກວ່າສີ່ສິບ (40) ຊົ່ວໂມງຕໍ່ອາທິດ ເວັ້ນເສຍແຕ່ວ່າຈະໄດ້ຮັບການອະນຸມັດຈາກ CDWA ແລ້ວເທົ່ານັ້ນ.

ທ່ານ, ລູກຄ້າຂອງທ່ານ ຫຼື ຜູ້ຈັດການກໍລະນີຂອງລູກຄ້າຂອງທ່ານ ອາດສາມາດຮ້ອງຂໍການເພີ່ມ WWL ຊົ່ວຄາວໄດ້. ຄຳຮ້ອງຂໍເພີ່ມ WWL ຊົ່ວຄາວຈະຖືກປະເມີນເປັນແຕ່ລະກໍລະນີໄປ ແລະ ບໍ່ສາມາດເກີນໄລຍະເວລາສິບສອງ (12) ເດືອນໄດ້. ເຫດຜົນສຳລັບການຮ້ອງຂໍການເພີ່ມ WWL ສາມາດຈະປະກອບດ້ວຍ:

- **ການຂາດຜູ້ໃຫ້ບໍລິການທີ່ພ້ອມໃຫ້ບໍລິການ:**
  - ລູກຄ້າໄດ້ພະຍາຍາມ ຫຼື ໄດ້ຕົກລົງທີ່ຈະພະຍາຍາມໂດຍສຸດຈະຫຼິດໃນການກຳນົດ ແລະ ວ່າຈ້າງ IP ເພີ່ມແລ້ວ, ແຕ່ລູກຄ້າຍັງມີຄວາມຕ້ອງການເວລາ ຫຼື ແຫຼ່ງຊັບພະຍາກອນເພີ່ມເຕີມ.
  - IP ຄົນອື່ນສຳລັບລູກຄ້າ ແມ່ນບໍ່ສາມາດໃຫ້ບໍລິການໄດ້ຊົ່ວຄາວ ເນື່ອງຈາກຄວາມຈຳເປັນດ້ານຄອບຄົວ/ດ້ານການແພດ.
  - ລູກຄ້າກຳລັງຈ້າງ IP ອື່ນຢ່າງຢູ່, ແຕ່ຂະບວນການຍັງບໍ່ທັນສຳເລັດ.
  - ລູກຄ້າເຕັມໃຈທີ່ຈະທຸ່ມແຫຼ່ງຊັບພະຍາກອນທັງໝົດ ແຕ່ຍັງບໍ່ມີໂອກາດທີ່ຈະຊອກຫາ IP ເພີ່ມໄດ້ (ລູກຄ້າແມ່ນລູກຄ້າໃໝ່, ການປະເມີນຄືນໃໝ່ສົ່ງຜົນໃຫ້ຈຳນວນຊົ່ວໂມງເພີ່ມຂຶ້ນ, IP ຄົນປັດຈຸບັນຂໍຢຸດເຊົາ ແລະ ອື່ນໆ).
  - ລູກຄ້າໄດ້ໃຊ້ແຫຼ່ງຊັບພະຍາກອນທັງໝົດໄປໝົດແລ້ວ.
- **ສຸຂະພາບ ແລະ ຄວາມປອດໄພຂອງລູກຄ້າ:**
  - IP ຈຳເປັນຕ້ອງໄດ້ຢູ່ເຮັດວຽກຕໍ່ໄປດົນຂຶ້ນ ເພາະວ່າລູກຄ້າປະສົບກັບພາວະສຸກເສີນແບບຜິດປົກກະຕິ ຫຼື IP ຄົນອື່ນບໍ່ສາມາດມາເຮັດວຽກກໄດ້ຢ່າງກະທັນຫັນ.
  - ລູກຄ້າ ຫຼື IP ຄວນແຈ້ງໃຫ້ CDWA ຊາບໃນວັນລັດຖະການຖັດໄປ (ຫຼື ມື້ທີ່ຖັດໄປທີ່ສົມເຫດສົມຜົນທີ່ເປັນໄປໄດ້) ຫຼັງຈາກເກີດສະຖານະການດັ່ງກ່າວ.

## ວິທີການຮ້ອງຂໍເພີ່ມ WWL ຊົ່ວຄາວ

ເພື່ອຮ້ອງຂໍການເພີ່ມ WWL ຊົ່ວຄາວ, ໃຫ້ໂທຫາເບີ 866.214.9899 ຫຼື ສົ່ງອີເມວຫາ InfoCDWA@ConsumerDirectCare.com ພ້ອມດ້ວຍຂໍ້ມູນຕໍ່ໄປນີ້:

- ຊື່ IP
- ຈຳນວນ WWL ໃນປັດຈຸບັນ
- ຈຳນວນຊົ່ວໂມງປະຈຳອາທິດທີ່ຮ້ອງຂໍ
- ຊື່ລູກຄ້າ
- ຈຳນວນຊົ່ວໂມງທີ່ໄດ້ຮັບອະນຸຍາດຂອງລູກຄ້າ (ການຮ້ອງຂໍບໍ່ສາມາດຂໍເກີນຈຳນວນຊົ່ວໂມງທີ່ໄດ້ຮັບອະນຸຍາດຕໍ່ອາທິດຂອງລູກຄ້າ)
- ເຫດຜົນໃນການຮ້ອງຂໍ
- ໄລຍະເວລາທີ່ຮ້ອງຂໍ
  - ວັນທີເລີ່ມຕົ້ນ (ຕ້ອງເປັນວັນອາທິດ)
  - ວັນທີສິ້ນສຸດ (ຕ້ອງເປັນວັນເສົາ)
- ລູກຄ້າກຳລັງຊອກຫາ IP ເພີ່ມບໍ?
- ມີການກະທຳອັນໃດແດ່ທີ່ໄດ້ດຳເນີນການໄປແລ້ວດ້ວຍຄວາມສຸດຈະຫຼິດໃຈ ເພື່ອພະຍາຍາມຫຼຸດຄວາມຈຳເປັນໃນການເຮັດວຽກລ່ວງເວລາ (ລວມທັງຂໍ້ມູນສະເພາະກ່ຽວກັບການກະທຳທີ່ໄດ້ດຳເນີນການໄປແລ້ວ)?
- ລູກຄ້າມີ IP ຄົນອື່ນທີ່ສາມາດຮັບຈຳນວນຊົ່ວໂມງເພີ່ມໄດ້ບໍ?
- ມີຄວາມຈຳເປັນດ້ານສຸຂະພາບ ແລະ ຄວາມປອດໄພຂອງລູກຄ້າແບບທັນທີບໍ? ຫຼື ການຮ້ອງຂໍເພີ່ມ WWL ຊົ່ວຄາວແມ່ນມີຄວາມຈຳເປັນເພື່ອຕອບສະໜອງຄວາມຕ້ອງການດ້ານສຸຂະພາບ ແລະ ຄວາມປອດໄພຂອງລູກຄ້າທີ່ໄດ້ເກີດຂຶ້ນແລ້ວ ຫຼື ບໍ?
- ຂໍ້ມູນເພີ່ມເຕີມໃດໆ ທີ່ຈະສະໜັບສະໜູນຄຳຮ້ອງຂໍ

CDWA ອາດຈະຕ້ອງການຂໍ້ມູນເພີ່ມເຕີມ ເພື່ອພິຈາລະນາຕັດສິນຜົນຂອງການຮ້ອງຂໍ WWL ຂອງທ່ານ.

20220510